## ການບ້ານບົດທີ 7 ພາກຕົ້ນ

# ຍ້າຍໄປອັນຕີໂອເຂຍ

*ໃນບົດທີ 1 ເຖິງບົດທີ 6 ເຮົາຮຽນເລື່ອງປະຫວັດຂອງໂຊໂລ ກ່ອນທີ່ເພິ່ນຍ້າຍໄປ ອັນຕີໂອເຂຍ. ໃນຄາວນັ້ນເພິ່ນກັບໃຈໃໝ່ ແລ້ວໄດ້ລອດຈາກການປ້ອຍດ່າຂອງພະບັນຍັດ. ເພິ່ນເຂົ້າໃຈແຈ້ງ ດີວ່າ ເປັນຜູ້ຮັບມໍລະດົກຕາມພະສັນຍາທີ່ມີຕໍ່ອັບລາຮາມ. ຈາກບົດທີ 7 ຕໍ່ໄປນີ້ ເຮົາຈະຮຽນເລື່ອງ ການອອກໄປປະກາດພະທຳໃຫ້ແກ່ຄົນຕ່າງຊາດ.*

ທວນຄືນ:

**1** ແມ່ນໃຜຢູ່ປະຈຳເມືອງຕາໂຊ ຖຽມຕົວໄວ້ເພື່ອໄປປະກາດໃຫ້ແກ່ຄົນທີ່ບໍ່ເປັນຊາດຢິວ? ____________________




ກ. ເມືອງທີ່ໝາຍໄວ້ເປັນອັກສອນ "ກ" ໃນແຜນທີ່ ທີ່ ໂຊໂລລໍຖ້າຫຼາຍປີຄືເມືອງໃດ? ____________

ຂ. ໂຊໂລຢູ່ເມືອງນັ້ນ ຈັກປີກ່ອນຈະອອກໄປປະກາດ ພະທຳໃຫ້ຄົນຕ່າງຊາດ? ________________

ຄ. ອີກເມືອງໜຶ່ງໃນແຜນທີ່ນັ້ນຄືເມືອງໃດ? ____________________

**2** ມາເຖິງເວລາທີ່ໂຊໂລຍ້າຍໄປ ອັນຕີໂອເຂຍ ບໍ່ມີໃຜປະກາດພະທຳໃຫ້ຄົນທີ່ບໍ່ເປັນຊາດຢິວ ເທື່ອ.

ກ. ຕາມໃນແຜນທີ່ນີ້ ມີອີກພວກໃດ ທີ່ຮັບຟັງ ຂ່າວປະເສີດຂອງພະເຢຊູ? ____________________

ຂ. ໃນເມືອງໃດກ່ອນ? ______________



**3** ເມືອງທີ່ເຂົາເລີ້ມຕົ້ນປະກາດພະທຳໃຫ້ຄົນຕ່າງຊາດໂດຍສະເພາະຄືເມືອງໃດ? ________

ກ. ຕົວອັກສອນໃດແມ່ນເມືອງທີ່ໂຊໂລລໍຖ້າຫຼາຍປີ?

______________________________________

ຂ. ເມືອງນັ້ນຊື່ຫຍັງ? ________________________

ຄ. ອັກສອນໃດແມ່ນເມືອງທີ່ເຂົາປະກາດພະທຳໂດຍສະເພາະໃຫ້ແກ່ຄົນຕ່າງຊາດຟັງ? ____________

ງ. ເມືອງນັ້ນຊື່ຫຍັງ? ________________________







**4** ຫຼາຍຄົນໃນເມືອງອັນຕີໂອເຂຍ ເຊື່ອໃນພະເຢຊູ. ເມື່ອພວກສາວົກໃນກຸງເຢລູຊາເລັມ ຮູ້ເລື່ອງເຂົາຕັດສິນໃຈໃຫ້ຄົນໄປຊ່ວຍ.

ກ. ເຂົາໃຊ້ໃຜໄປ? (ເບິ່ງຮູບ) ___________

ຂ. ໃຊ້ໄປເມືອງໃດ? ________________

ຄ. ໃຊ້ຈາກກຸງໃດໄປ? ______________

**5** ໃຫ້ທ່ານສັງເກດແຜນການຂອງພະເຈົ້າ! ຜູ້ທີ່ຈະໄປຊ່ວຍຄຼິດສະຕຽນໃນເມືອງອັນຕີໂອເຂຍ ເປັນເພື່ອນທີ່ແນະນຳໃຫ້ໂຊໂລຮູ້ພວກສາວົກແລະຄຼິດສະຕຽນເມື່ອພວກເຂົາບໍ່ທັນໄວ້ໃຈ ໂຊໂລເທື່ອ.

ກ. ເພື່ອນເກົ່າທີ່ເຂົ້າຂ້າງໂຊໂລຊື່ຫຍັງ? ________________________________

ຂ. ພວກສາວົກໃນກຸງເຢລູຊາເລັມໃຊ້ໃຜໄປຊ່ວຍໃນເມືອງອັນຕີໂອເຂຍ? ___________

**6** ຄຼິດສະຕະຈັກໃນເມືອງອັນຕີໂອເຂຍຂະຫຍາຍໄວ້ຫຼາຍ. ບາລະນາບາ ຕ້ອງການໃຫ້ຜູ້ອື່ນມາຊ່ວຍ ດັ່ງນັ້ນ ໄປຫາເພື່ອນເກົ່າ.

ກ. ບາລະນາບາ ເຫັນດີໄປຂໍໃຜມາຊ່ວຍ?

___________________________

ຂ. ໄປຫາຢູ່ໃສ?

___________________________






**7** ຄົບກຳນົດທີ່ໂຊໂລຕັ້ງຕົ້ນປະກາດໃຫ້ແກ່ຄົນທີ່ບໍ່ເປັນຊາດຢິວ!

ກ. ຜູ້ໃດໄປຫາໂຊໂລຢູ່ຕາໂຊ? ____________

ຂ. ໂຊໂລຈະເລີ້ມຕົ້ນປະກາດພະທຳໃຫ້ຄົນຕ່າງຊາດໃນເມືອງໃດ? ______________

**8** ໂຊໂລດີໃຈຮ່ວມງານກັບບາລະນາບາ ລະຫວ່າງຄົນຕ່າງຊາດໃນເມືອງອັນຕີໂອເຊຍ

ກ. ໂຊໂລເລີ້ມປະກາດພະທຳໂດຍສະເພາະໃຫ້ຄົນທີ່ບໍ່ເປັນຊາດຢິວຟັງໃນເມືອງໃດກ່ອນ?

______________________________________________________________

ຂ. ແມ່ນຜູ້ໃດໄປຊອກຫາໂຊໂລໃນເມືອງຕາໂຊ? ____________________________

**9** ຕາມແຜນທີ່ຂ້າງຂວານີ້

ກ. ອັກສອນໃດແມ່ນບ່ອນທີ່ໂຊໂລລໍຖ້າ 10 ປີ? ______

ເມືອງນັ້ນຊື່ຫຍັງ? ______________________

ຂ. ທີ່ໂຊໂລເລີ້ມຮັບພາລະກິດການປະກາດພະທຳໃຫ້ຄົນຕ່າງຊາດໝາຍໄວ້ດ້ວຍຕົວອັກສອນໃດ? _____

ຄ. ເມືອງນັ້ນຊື່ຫຍັງ? ______________________




ຝຶກ: ໃຫ້ບິກແດງຂີດກ້ອງຄຳວ່າ "ຕາໂຊ" ໃນ ກຈກ 11:25
ເອົາບິກຟ້າຂີດກ້ອງຄຳວ່າ "ບາລະນາບາ" ແລະ "ໂຊໂລ".

**10** ໃຫ້ເປີດອ່ານ ກຈກ 11:19-26

ກ. ຂໍ້ໃດບອກວ່າຄຼິດສະຕຽນຖືກກະຈັດກະຈາຍໄປເຖິງອັນຕີໂອເຂຍ? _______________

ຂ. ຂໍ້ໃດບອກວ່າເຂົາບໍ່ໄດ້ກ່າວພະທຳແກ່ຜູ້ໃດນອກຈາກພວກຢິວຢ່າງດຽວ? ___________

ຄ. ຕໍ່ໄປມີບາງຄົນມາປະກາດພະທຳໃຫ້ຊາວກຼີກເໝືອນກັນໃນຂໍ້ໃດ? _______________

ງ. ລະຫວ່າງພວກນັ້ນ ມີຫຼາຍຄົນທີ່ເຊື່ອຕ່າວຄືນມາຫາພະອົງ. ການນັ້ນເຫັນໃນຂໍ້ໃດ? _____

ຈ. ຂໍ້ໃດບອກວ່າຄຼິດສະຕະຈັກໃນກຸງເຢລູຊາເລັມໃຊ້ບາລະນາບາໄປຍັງອັນຕີໂອເຂຍ? ___

ສ. ບາລະນາບາຕັກເຕືອນຄົນເຫຼົ່ານັ້ນຕັ້ງໃຈໝັ້ນຄົງຕິດສະໜິດຢູ່ກັບພະອົງເຫັນໃນຂໍ້ໃດ? __

ຊ. ຂໍ້ໃດບອກວ່າບາລະນາບາເຕັມໄປດ້ວຍພະວິນຍານບໍລິສຸດ? ___________________

ຍ. ຂໍ້ໃດບອກວ່າບາລະນາບາໄປເມືອງຕາໂຊເພື່ອຊອກຫາໂຊໂລມາຊ່ວຍ? ___________

ດ. ເຂົາທັງສອງສັ່ງສອນໃນຄຼິດສະຕະຈັກອັນຕີໂອເຂຍໜຶ່ງປີ ເຫັນໃນຂໍ້ໃດ? ____________

ຄຳຕອບ:

**1** *ໂຊໂລ ກ. ຕາໂຊ ຂ. 10 ປີ ຄ. ອັນຕີໂອເຂຍ.*

**2** *ກ. ຄົນທີ່ບໍ່ເປັນຊາດຢິວ ຂ. ອັນຕີໂອເຂຍ*

**3** *ອັນຕີໂອເຂຍ ກ. ອັກສອນ (ຂ) ຂ. ຕາໂຊ ຄ. ອັກສອນ (ຄ) ງ. ອັນຕີໂອເຂຍ*

**4** *ກ. ບາລະນາບາ ຂ. ອັນຕີໂອເຂຍ ຄ. ເຢລູຊາເລັມ*

**5** *ກ. ບາລະນາບາ ຂ. ບາລະນາບາ*

**6** *ກ. ໂຊໂລ ຂ. ຕາໂຊ*

**7** *ກ. ບາລະນາບາ ຂ. ອັນຕີໂອເຂຍ*

**8** *ກ. ອັນຕີໂອເຂຍ ຂ. ບາລະນາບາ*

**9** *ກ. ງ ຕາໂຊ ຂ. ຈ ຄ. ອັນຕີໂອເຂຍ*

**10** *ກ. ຂໍ້ 19 ຂ. ຂໍ້ 19 ຄ. ຂໍ້ 20 ງ. ຂໍ້ 21 ຈ. ຂໍ້ 22 ສ. ຂໍ້ 23 ຊ. ຂໍ້ 24*
*ຍ. ຂໍ້ 25 ດ. ຂໍ້ 26*

**ການບ້ານບົດທີ 7 ພາກປາຍ**

# ໂປໂລກັບຕີໂຕໄປເຢລູຊາເລັມ

ຄລຕ 2:1-10

*ໄດ້ປີໜຶ່ງຕັ້ງແຕ່ໂປໂລ(ໂຊໂລ)ເລີ້ມຕົ້ນຮັບພາລະປະກາດພະທຳໃນເມືອງອັນຕີໂອເຂຍ. ຄຶດສະຕຽນໃນກຸງເຢລູຊາເລັມເຫັນຄົນທີ່ບໍ່ເປັນຊາດຢິວຫຼາຍຄົນມາເປັນຄຶດສະຕຽນ. ໃນບົດນີ້ເຮົາຈະຮຽນເລື່ອງການກະທຳການຕອບຂອງເຂົາ.*

**1** ທວນຄືນກ່ອນ!

ກ. ໂຊໂລລໍຖ້າ 10 ປີໃນເມືອງໃດກ່ອນຈະຮັບພາລະປະກາດພະທຳໃຫ້ຄົນທີ່ບໍ່ເປັນຊາດຢິວ?

________________________________________________________

ຂ. ແມ່ນໃຜໄປຊອກຫາເພິ່ນຈາກເມືອງຕາໂຊມາຊ່ວຍປະກາດພະທຳໃຫ້ຄົນທີ່ບໍ່ເປັນຊາດຢິວ? ________________________________________________

ຄ. ເຂົາທັງສອງຮ່ວມກັນປະກາດພະທຳໃຫ້ຄົນຕ່າງຊາດນັ້ນໃນເມືອງໃດ? ____________

**2** ໃຫ້ອ່ານ ກຈກ 11:27-30

ກ. ພະວິນຍານໃຫ້ຄົນທີ່ຊື່ວ່າ ອາຄະໂບທຳນວາຍເລື່ອງຫຍັງ? ____________________

ຂ. ຕາມໃນ ກຈກ 11:29 ຄຶດສະຕະຈັກຕົກລົງກັນ ຢ່າງໃດ? (ເລືອກ)

_______ ຈະຂຽນຈົດໝາຍໄປຫາຄົນອຶດຢາກ

_______ ຈະຊ່ວຍຄົນທີ່ອຶດຢາກ

ຄ. ຄຶດສະຕຽນໃນອັນຕີໂອເຂຍໃຊ້ສອງຄົນໃດໄປຊ່ວຍເຂົາ? (ກຈກ 11:30)

____________________________ ແລະ ____________________________

**3** ຫຼັງຈາກພະເຢຊູຄືນຈາກຕາຍ ຄຶດສະຕະຈັກທຳອິດຖືກຕັ້ງໄວ້ໃນກຸງເຢລູຊາເລັມ. ແມ່ນພວກນັ້ນທີ່ຮັບ ເຊື່ອໃນວັນເພັນເຕຄໍສະເຕ ມີ 3000 ຄົນຮັບເຊື່ອໃນວັນດຽວ. ຫຼາຍຄົນເຂົາຂາຍຊັບສົມບັດຖະ ຫວາຍໃຫ້ຄຶດສະຕະຈັກ ດັ່ງນັ້ນເວລາເກີດມີຄວາມອຶດຢາກ ເປັນການເໝາະສົມທີ່ຄຶດສະຕະຈັກອື່ນ ຈະຊ່ວຍເຂົາຄືນ. ໂຊໂລແລະບາລະນາບາເອົາຄວາມຊ່ວຍເຫຼືອຈາກຄຶດສະຕຽນໃນອັນຕີໂອເຂຍ ໄປໃຫ້ຄຶດສະຕຽນທີ່ທຸກຍາກໃນກຸງໃດ? _______________




**4** ກ. ຄຼິດສະຕະຈັກໃດ ຕົກລົງຈະຊ່ວຍພີ່ນ້ອງທີ່ອຶດຢາກ? ______________________

ຂ. ເອົາໄປໃຫ້ຄຼິດສະຕະຈັກໃດ? __________

ຄ. ຈັດສອງຄົນໃດ ເອົາຄວາມຊ່ວຍເຫຼືອນັ້ນໄປ?

________________________________

**5** ຫຼັງຈາກໂຊໂລກັບໃຈໃໝ່ຈັກປີໂຊໂລຈຶ່ງໄປເຢລູຊາເລັມພ້ອມກັບບາລະນາບາແລະຕີໂຕ? (ຄາລາເຕຍ 2:1) ________________________________

**6** ໃຫ້ນັບທວນຄືນ!

ກ. ຫຼັງຈາກກັບໃຈໃໝ່ ໂຊໂລຢູ່ເຂດດາມາເຊແລະອາລະເບຍຈັກປີ? ________________

ຂ. ເມື່ອໜີຈາກເຢລູຊາເລັມ ເພິ່ນລໍຖ້າຢູ່ຕາໂຊຈັກປີ? ________________________

ຄ. ເພິ່ນສັ່ງສອນໃນຄຼິດສະຕະຈັກອັນຕີໂອເຂຍດົນປານໃດກ່ອນໄປເຢລູຊາເລັມ? ________

ງ. ຮວມຕັ້ງແຕ່ກັບໃຈໃໝ່ຈົນກວ່າເອົາຄວາມຊ່ວຍເຫຼືອຈາກອັນຕີໂອເຂຍໄປໃຫ້ຄຼິດສະຕຽນທີ່ອຶດ ຢາກໃນເຢລູຊາເລັມ ມີຈັກປີ? ______________________________

**7** ໃຫ້ກັບໄປອ່ານ ຄລຕ 2:1 ອີກ.

ກ. ຕັ້ງແຕ່ກັບໃຈໃໝ່ ຈົນກວ່າໄປເຢລູຊາເລັມກັບບາລະນາບາ ແລະຕີໂຕນັບແລ້ວມີຈັກປີ? ___

ຂ. ໂຊໂລແລະບາລະນາບາພາໃຜໄປເຢລູຊາເລັມນຳ? __________________________

ຄ. ຕາມ ຄລຕ 2:3 ຕີໂຕ ເປັນຊາດຢິວບໍ່? ______________________________

**8** ໃຫ້ອ່ານ ຄລຕ 2:1-10 ອີກ ແລ້ວໃຫ້ຕື່ມຂໍ້ທີ່ເຫັນຈຸດຕ່າງ ໆ ຕໍ່ໄປນີ້:

ກ. ຫຼັງຈາກກັບໃຈໃໝ່ 14 ປີ ໂຊໂລໄປເຢລູຊາເລັມໃນເທື່ອນີ້ ຄລຕ 2: _____

ຂ. ໄປກັບບາລະນາບາ ແລະຕີໂຕ ຄລຕ 2: _____

ຄ. ເພິ່ນເລົ່າໃຫ້ຄົນສຳຄັນຟັງເປັນການສ່ວນຕົວ ຄລຕ 2: _____

ງ. ຕີໂຕບໍ່ເປັນຊາດຢິວ ແຕ່ເປັນຄົນຕ່າງຊາດ ຄລຕ 2: _____

ຈ. ພວກຜູ້ນຳບໍ່ໄດ້ບັງຄັບຕີໂຕໃຫ້ຮັບພິທີຕັດ ຄລຕ 2: _____

ສ. ມີພີ່ນ້ອງທີ່ແປກປອມທີ່ຈະມາບັງຄັບຕີໂຕ(ໃຫ້ຮັບພິທີຕັດ) ຄລຕ 2: _____

ຊ. ໂຊໂລບໍ່ໄດ້ອ່ອນຍອມຕໍ່ເຂົາ ຄລຕ 2: _____

ຍ. ຄົນທີ່ເຂົາຖືວ່າເປັນຄົນສຳຄັນບໍ່ໄດ້ເພີ້ມເຕີມສິ່ງໜຶ່ງສິ່ງໃດແກ່ຄຳສອນຂອງໂຊໂລ ຄລຕ 2: _____

ດ. ເຂົາຍອມຮັບຮູ້ວ່າໂຊໂລຮັບພາລະປະກາດຕໍ່ຄົນຕ່າງຊາດຢ່າງດຽວກັນກັບເປໂຕຮັບພາລະປະກາດຕໍ່ຊາດຢິວ ຄລຕ 2: _____

ຕ. ພວກສາວົກໄດ້ຍື່ນມືຂວາໃຫ້ໂຊໂລຈັບ ຄລຕ 2: _____

ຖ. ເຂົາເຫັນດີໃຫ້ຊ່ວຍຄົນຍາກຈົນ ຄລຕ 2: _____

**9** ເຢລູຊາເລັມເປັນສູນກາງຄຣິດສະຕະຈັກຊາດຢິວ ແຕ່ໂຊໂລສວຍໂອກາດໜີໄປສະເໜີສິ່ງທີ່ເຂົາບໍ່ຢາກຮັບຮູ້. ເປັນສິ່ງໃດທີ່ເພິ່ນແນະນຳໃຫ້ເຂົາ? (ເລືອກ)

ກ. ແນະນຳບາລະນາບາທີ່ເປັນຄຣິດສະຕຽນຊາດຢິວ

ຂ. ແນະນຳຕີໂຕທີ່ເປັນຄຣິສະຕຽນຕ່າງຊາດ (ບໍ່ໄດ້ຮັບພິທີຕັດ)

ຄ. ຊັກຊວນໃຫ້ເຂົາຊ່ວຍຄົນທຸກຍາກ

**10** ທີ່ໂຊໂລແນະນຳຄຣິດສະຕຽນທີ່ບໍ່ເປັນຊາດຢິວ ແລະທີ່ບໍ່ໄດ້ຮັບພິທີຕັດໃຫ້ເຂົ້າຮ່ວມສາມັກຄີກັບຄຣິດສະຕຽນ ຢິວທີ່ໄດ້ຮັບພິທີຕັດກໍເປັນການຍາກຫຼາຍ. ໃນນີ້ ອາດຈະມີໝູ່ບ້ານທີ່ເຂົາເປັນຄຣິດສະຕຽນແລ້ວ ຫຼາຍສິບປີມາ. ຄຣິດສະຕຽນເຫຼົ່ານັ້ນເປັນເຜົ່າດຽວ ພາສາດຽວ. ໃນເຂດດຽວທີ່ເຂົາຢູ່ ມີອີກຊົນ ເຜົ່າໜຶ່ງທີ່ບໍ່ເຄີຍມີຄຣິດສະຕຽນຈັກເທື່ອ. ຕໍ່ມາກໍມີແຕ່ຄົນດຽວທີ່ເຂົ້າຮັບເຊື່ອເປັນຄຣິດສະຕຽນ. ຄຣິດສະ ຕະຈັກທີ່ຕັ້ງໄວ້ແລ້ວນັ້ນບໍ່ຢາກຕ້ອນຮັບເພິ່ນເພາະເປັນຄົນຕ່າງບ້ານ ຕ່າງເຜົ່າ ຕ່າງພາສາ. ເຫດການນີ້ພວກຄຣິດສະຕຽນເກົ່າຄວນເຮັດຢ່າງໃດ? (ເລືອກ)

ກ. ຊັກຊວນໃຫ້ເພິ່ນຮຽນປາກພາສາຊົນເຜົ່າດຽວກັນກ່ອນ. ແລ້ວຈຶ່ງຈະຮັບເພິ່ນ

ຂ. ຮັບມາເປັນພີ່ນ້ອງຄຣິດສະຕຽນ ແລ້ວສາມັກຄີກັບເຂົາຢ່າງຖືກຕ້ອງ

ຄ. ບໍ່ຮັບເພິ່ນເພາະບໍ່ເປັນເຜົ່າດຽວກັນ

**11** ເມື່ອຕີໂຕຈະເຂົ້າໃນຄຣິດສະຕະຈັກກຸງເຢລູຊາເລັມ ໝົດທຸກຄົນລໍຖ້າຈົນໄດ້ຮັບຄຳຕອບຈາກພວກສາ ວົກໃນກຸງເຢລູຊາເລັມ. ວັນເວລາທີ່ພວກສາວົກຈະຕັດສິນໃຈເລື່ອງຂອງຕີໂຕນັ້ນເປັນເວລາທີ່ຜູ້ຕັດສິນ ເຄັ່ງຄຽດຫຼາຍເພາະສິດຂອງຄຣິດສະຕຽນເຮົາທີ່ບໍ່ເປັນຊາດຢິວ ຂຶ້ນຢູ່ກັບການຕັດສິນຂອງເຂົາ. ຖ້າ ເຂົາຕັດສິນໃຈວ່າຈະຕ້ອງເຂົ້າຊາດຢິວຮັບພິທີຕັດກ່ອນຈຶ່ງຈະເປັນຄຣິດສະຕຽນໄດ້ ຄຣິດສະຕຽນໃນປະ ຈຸບັນນີ້ກໍຈະຕ້ອງຮັບພິທີຕັດຕາມກົດສາສະໜາຢິວກ່ອນບໍ່ຈຶ່ງຈະເປັນຄຣິດສະຕຽນໄດ້. ໃນ ຄລຕ 2:3 ເຂົາຕັດສິນຢ່າງໃດ? (ເລືອກ)

ກ. ຄຣິດສະຕຽນຄົນຊາດຕ່າງ ໆ ບໍ່ຕ້ອງຮັບພິທີຕັດ

ຂ. ຄຣິດສະຕຽນຄົນຊາດຕ່າງ ໆ ຕ້ອງຮັບພິທີຕັດກ່ອນ

ຄ. ຕ້ອງຮັບພິທີແຖຜົມກ່ອນ

**12** ແຕ່ພາຍໃນຄຣິດສະຕະຈັກກຸງເຢລູຊາເລັມ ສຽງສ່ວນໜ້ອຍທີ່ຢາກບັງຄັບຄຣິດສະຕຽນທຸກຊາດໃຫ້ຖື ພະບັນຍັດຂອງໂມເຊທຸກປະການ

ກ. ພວກນັ້ນເປັນພີ່ນ້ອງຈິງໃຈຫຼືພີ່ນ້ອງແປກປອມ? (ຄລຕ 2:4) ____________________

ຂ. ເຂົາຢາກບັງຄັບໃຫ້ຕີໂຕຮັບພິທີໃດ? ____________________________________

**13** ໂຊໂລຍຶດໂອກາດນີ້ໃຫ້ຄຣິດສະຕຽນຊາດຢິວໃນກຸງເຢລູຊາເລັມຜະເຊີນໜ້າກັບບັນຫານີ້ ເພື່ອໃຫ້ເຂົາ ຕັດສິນໃຈຢ່າງແນ່ນອນ. ດັ່ງນັ້ນເພິ່ນຍົກບັນຫານີ້ໄວ້ກັບຜູ້ນຳເປັນການສ່ວນຕົວ.

ກ. ຕາມໃນ ຄລຕ 2:7 ພວກສາວົກເຫຼົ່ານັ້ນຍອມຮັບວ່າໂຊໂລ ຮັບພາລະປະກາດຂ່າວປະເສີດ ໃຫ້ ຄົນທີ່ບໍ່ເປັນຊາດຢິວບໍ່? ____________________________________________

ຂ. ເຂົາບັງຄັບໃຫ້ຕີໂຕຮັບພິທີຕັດບໍ່? ______________________________________

**14** ພວກສາວົກທີ່ເປັນຜູ້ນໍາຄຼິດສະຕະຈັກໃນກຸງເຢລູຊາເລັມເຫັນວ່າພະເຈົ້າໄດ້ມອບພາລະ ປະກາດຂ່າວ ປະເສີດລະຫວ່າງຄົນຕ່າງຊາດໃຫ້ໂຊໂລ. ໃຫ້ອ່ານ ຄລຕ 2:8 ອີກ.

ກ. ແມ່ນຄົນໃດທີ່ພະເຈົ້າບັນດົນໃຈໃຫ້ໄປຫາພວກທີ່ຖືພິທີຕັດ? (ເລືອກ)

________ ເປໂຕ ________ ໂຊໂລ

ຂ. ຜູ້ໃດຈະໄປຫາຄົນຕ່າງຊາດ? ________________________________________

**15** ເຖິງວ່າພີ່ນ້ອງທີ່ແປກປອມຍັງຕໍ່ສູ້ກໍຕາມ ແຕ່ພວກຜູ້ນໍາຄຼິດສະຕະຈັກໃນກຸງເຢລູຊາເລັມ ເຫັນພ້ອມກັບ ໂຊໂລແລະບາລະນາບາວ່າ ບໍ່ຈໍາເປັນທີ່ຈະຖືພິທີຕັດຈຶ່ງເປັນຄຼິດສະຕຽນໄດ້. ຄຼິດສະຕຽນຄົນຕ່າງຊາດຈາກອັນຕີໂອເຂຍທີ່ບໍ່ຖືພິທີຕັດຊື່ຫຍັງ? ___________________

**16** ເຖິງວ່າພີ່ນ້ອງແປກປອມວາງອຸບາຍຕໍ່ສູ້ກໍຕາມ ແຕ່ພວກສາວົກໃນກຸງເຢລູຊາເລັມສະໜັບສະໜູນ ໂຊໂລແລະບາລະນາບາໃນສອງປະການໃດ? (ເລືອກ)

ກ. ຄຼິດສະຕຽນຕ່າງຊາດຕ້ອງຮັບພິທີຕັດ

ຂ. ຄຼິດສະຕຽນຕ່າງຊາດບໍ່ຕ້ອງຮັບພິທີຕັດ

ຄ. ພະເຈົ້າໃຊ້ໂຊໂລເປັນຜູ້ປະກາດພະທໍາໃຫ້ຄົນຕ່າງຊາດ

ງ. ພະເຈົ້າບໍ່ໃຊ້ໂຊໂລເປັນຜູ້ປະກາດພະທໍາ

ຈ. ເປໂຕບໍ່ແມ່ນຜູ້ປະກາດພະທໍາໃຫ້ຊາດຢິວ

**17** ແຕ່ກ່ອນ ພວກຄົນຢິວແລະພວກຄົນຕ່າງຊາດຢູ່ໃຜຢູ່ມັນ. ຕັ້ງແຕ່ເຂົາທັງສອງຝ່າຍເປັນຄຼິດສະຕຽນ ບໍ່ມີສິ່ງໃດທີ່ກີດກັ້ນ. ຄຼິດສະຕຽນຊາດຢິວແລະຄຼິດສະຕຽນຄົນຕ່າງຊາດສະແດງເປັນຈິດໜຶ່ງໃຈດຽວກັນ.

ກ. ຄຼິດສະຕຽນຊາດຢິວໃນກຸງເຢລູຊາເລັມ ຂໍຫຍັງຈາກໂຊໂລແລະບາລະນາບາໃນ ຄລຕ 2:10? ______________________________________________________

ຂ. ໂຊໂລແລະບາລະນາບາ ເຫັນດີຊ່ວຍບໍ່? ______________________________

ຄ. ເຂົາເຮັດຫຍັງເມື່ອມາຈາກອັນຕີໂອເຂຍທີ່ສະແດງວ່າເຂົາພ້ອມໃຈຊ່ວຍ? (ກຈກ 11:29)

______________________________________________________________

**18** ພະຄໍາພີຕອນນີ້ ເຫັນວ່າສິ່ງກີດກັ້ນລະຫວ່າງຊາດຢິວແລະຄົນຕ່າງຊາດສູນຫາຍໄປແລ້ວ. ໃຫ້ທ່ານ ເລືອກເອົາສອງປະການທີ່ເປັນຫຼັກກ່ຽວກັບສິ່ງທີ່ກີດກັ້ນສູນຫາຍໄປ. (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ພວກສາວົກໃນກຸງເຢລູຊາເລັມ ບັງຄັບໃຫ້ຕີໂຕຮັບພິທີຕັດ ກ່ອນຈຶ່ງຈະຖືວ່າເປັນພີ່ນ້ອງຄຼິດສະຕຽນ

ຂ. ເຖິງຕີໂຕເປັນຄົນຕ່າງຊາດທີ່ບໍ່ໄດ້ຮັບພິທີຕັດກໍຕາມ ເຂົາຮັບຮູ້ວ່າເປັນຄຼິດສະຕຽນ ຄືເປັນສິ່ງທີ່ບໍ່ ເຄີຍໄດ້ຍິນມາກ່ອນ.

ຄ. ຄຼິດສະຕຽນຄົນຕ່າງຊາດຈາກເມືອງອັນຕີໂອເຂຍ ຝາກຂອງຊ່ວຍເຫຼືອໃຫ້ຄຼິດສະຕຽນຊາດຢິວ ທີ່ທຸກຍາກ -ຄືເປັນສິ່ງທີ່ບໍ່ເຄີຍໄດ້ຍິນມາກ່ອນ

ງ. ຄຼິດສະຕຽນຊາດຢິວໃນກຸງເຢລູຊາເລັມ ຝາກເງິນໄປໃຫ້ຄຼິດສະຕຽນຄົນຕ່າງຊາດໃນເມືອງອັນຕີ ໂອເຂຍ.

**19** ເມື່ອໂຊໂລແລະບາລະນາບາເດີນທາງກັບໄປເມືອງອັນຕີໂອເຂຍເຂົາພໍໃຈ. ເຂົາຮູ້ວ່າພະເຈົ້າໄດ້ ເລືອກຕັ້ງເຂົາໄວ້ເປັນຜູ້ປະກາດພະທຳໃຫ້ຄົນທີ່ບໍ່ເປັນຊາດຢິວ. ແລ້ວພວກຜູ້ນຳຄຼິດສະຕະຈັກໃນກຸງ ເຢລູຊາເລັມກໍສະໜັບສະໜູນການນັ້ນ. ເຂົາໄປຮ່ວມກັບຜູ້ນຳຄຼິດສະຕະຈັກໃນກຸງໃດມາ? ___________________________________________________________

**20** ຄລຕ 3:28 ບອກສິ່ງທີ່ກີດກັ້ນທີ່ສູນຫາຍໃນເວລາຈະເປັນຄຼິດສະຕຽນ. (ຕື່ມຄວາມທີ່ຂາດ)

ກ. ຈະບໍ່ເປັນຊາດ ____________ ຫຼືຄົນ ___________________________________

ຂ. ຈະບໍ່ເປັນຂ້ອຍ ____________ ຫຼືເປັນ __________________________________

ຄ. ຈະບໍ່ເປັນ _______________ ຫຼື _____________________________________

ເພາະວ່າເຈົ້າທັງປວງ ເປັນອັນໜຶ່ງອັນດຽວກັນໃນພະຄຼິດຄືພະເຢຊູ

- *ຕໍ່ໄປເຮົາຈະຮຽນກ່ຽວກັບຕີໂຕໃນເຫຼັ້ມທີ 3*

ຄຳຕອບ:

1 ກ. ຕາໂຊ ຂ. ບາລະນາບາ ຄ. ອັນຕີໂອໂຊຍ

2 ກ. ການອຶດຢາກ ຂ. ຈະຊ່ວຍຄົນທີ່ອຶດຢາກ ຄ. ບາລະນາບາ ແລະ ໂຊໂລ

3 ເຢລູຊາເລັມ

4 ກ. ອັນຕີໂອເຂຍ ຂ. ເຢລູຊາເລັມ ຄ. ບາລະນາບາ ແລະ ໂຊໂລ

5 14 ປີ

6 ກ. 3 ປີ ຂ. 10 ປີ ຄ. 1 ປີ ງ. 14 ປີ

7 ກ. 14 ປີ ຂ. ຕີໂຕ ຄ. ບໍ່ເປັນຊາດຢິວ

8 ກ. 1 ຂ. 1 ຄ. 2 ງ. 3 ຈ. 3 ສ. 4 ຊ. 5
ຍ. 6 ດ. 7 ແລະ 8 ຕ. 9 ຖ.10

9 ຂ ຖືກ

10 ຂ ຖືກ

11 ກ ຖືກ

12 ກ. ແປກປອມ ຂ. ພິທີຕັດ

13 ກ. ຮັບ ຂ. ບໍ່

14 ກ. ເປໂຕ ຂ. ໂຊໂລ

15 ຕີໂຕ

16 ຂ ຄ ຖືກ

17 ກ. ໃຫ້ຊ່ວຍຄົນຍາກຈົນ ຂ. ເຫັນດີຊ່ວຍ
ຄ. ເຂົ້າບໍລິຈາກຕາມກຳລັງ ຝາກໄປຊ່ວຍພີ່ນ້ອງໃນແຂວງຢູດາ

18 ຂ ຄ ຖືກ

19 ເຢລູຊາເລັມ

20 ກ. ຢິວ... ຕ່າງຊາດ ຂ. ຂ້າ... ອິດສະລະ ຄ. ຊາຍ... ຍິງ

**ໃນການປະຊຸມບົດທີ 7**

# ສິ່ງກີດກັ້ນສູນຫາຍ

ຄລຕ 3:28

**1** ພະເຈົ້າຊົງສັນຍາຕໍ່ທຸກຊາດທີ່ຈະມາທາງເຊື້ອສາຍຂອງອັບລາຮາມເມື່ອສອງພັນປີກ່ອນ ແຕ່ບໍ່ສຳເລັດ ເພາະມີສິ່ງກີດກັ້ນ. ແຕ່ເມື່ອໂຊໂລກັບໃຈໃໝ່ເຫັນວ່າພະເຈົ້າເລືອກເພິ່ນໄວ້ໃຫ້ເປັນຜູ້ປະກາດ ພະທຳແກ່ຄົນທີ່ບໍ່ເປັນຊາດຢິວ.

ກ. ໂຊໂລລໍຖ້າຈັກປີໃນເມືອງຕາໂຊ ກ່ອນຈະເລີ້ມຕົ້ນປະກາດພະທຳໃຫ້ຄົນຕ່າງຊາດ? ___

ຂ. ໂຊໂລກັບບາລະນາບາເລີ້ມຕົ້ນສ້າງຄວາມສຳພັນລະຫວ່າງຄຼິດສະຕຽນຊາດຢິວ ແລະຄຼິດສະຕຽນ ຄົນຕ່າງຊາດໂດຍເອົາຄຼິດສະຕຽນຄົນຕ່າງຊາດໄປແນະນຳໃຫ້ຜູ້ນຳຄຼິດສະຕະຈັກຊາດຢິວໃນກຸງ ເຢລູຊາເລັມຮູ້. ຄຼິດສະຕຽນຄົນນັ້ນຊື່ຫຍັງ? ___________________

**2** ຈາກເວລານີ້ຕໍ່ໄປເຫັນວ່າສິ່ງທີ່ກີດກັ້ນແມ່ນສູນເສຍໄປເທື່ອລະນ້ອຍ ພະພອນທີ່ພະເຈົ້າສັນຍາໃຫ້ອັບລາຮາມຈະສຳເລັດໄດ້ໂດຍໂຊໂລ. ຄລຕ 3:28 ບອກເຖິງສອງປະການ

- *ສິ່ງທີ່ກີດກັ້ນລະຫວ່າງຄົນກັບຄົນ*
- *ເຮົາເປັນອັນໜຶ່ງອັນດຽວກັນໃນພະເຢຊູຄຼິດ.*

ກ. ໂປໂລ (ໂຊໂລ)ຍົກສະເໜີສິ່ງກີດກັ້ນລະຫວ່າງ 3 ຄູ່ໃດ?

______________________________ ຫຼື ______________________________

______________________________ ຫຼື ______________________________

______________________________ ຫຼື ______________________________

ຂ. ແຕ່ 3 ຄູ່ທີ່ມີສິ່ງກີດກັ້ນກາຍເປັນຢ່າງໃດໃນພະຄຼິດຄືພະເຢຊູ? (ຂໍ້ 28) _____________

_______________________________________________________________

## ສິ່ງກີດກັ້ນທີ່ແຍກຄົນຈາກກັນແລະກັນ

**3** ພະຄຳພີເວົ້າເຖິງສິ່ງກີດກັ້ນທີ່ແຍກຄົນໃຫ້ເປັນພັກເປັນພວກ.

ກ. ໃນ ກຈກ 10:28 ບອກວ່າ " .... ຄົນຊາດຢິວ ຈະເຂົ້າຮ່ວມສະມາຄົມກັບຄົນຕ່າງຊາດ ຫຼືເຂົ້າຫາເຂົາກໍເປັນການຕ້ອງຫ້າມ". ການນັ້ນອ້າງເຖິງສິ່ງທີ່ກີດກັ້ນລະຫວ່າງສອງພວກໃດ?

_______________________________________________________________

ຂ. ສຸພາສິດ 22:2 ກ່າວເຖິງການແຍກກັນລະຫວ່າງສອງພວກໃດ? ________________

_______________________________________________________________

ຄ. ມາລະໂກ 9:38 ຄຼິດສະຕຽນຈັກພວກ? ________________________________

ງ. ມາລະໂກ 10:13-14 ແຍກລະຫວ່າງຜູ້ໃຫຍ່ກັບໃຜ? ________________________

ຈ. ລູກາ 19:7 ລະຫວ່າງຄົນທີ່ຖືຕົວວ່າເປັນຄົນສິນທຳແລະໃຜ? ____________________

ສ. ກຈກ 26:11 ລະຫວ່າງສອງພວກໃດ? ____________________________________

ຊ. ສພສ 25:21 ລະຫວ່າງພວກເຮົາກັບໃຜ? _________________________________

**4** ໃນຊີວິດຂອງທ່ານມີສິ່ງກີດກັ້ນທີ່ແຍກທ່ານອອກຈາກຄົນອື່ນບໍ່? ____________________

_____________________________________________________________________

## ພະເຢຊູທຳລາຍເຄື່ອງກີດກັ້ນ

**5** ຄວາມກຽດຊັງກັນລະຫວ່າງຊາດຢິວແລະຄົນທີ່ບໍ່ເປັນຊາດຢິວໃນສະໄໝພະຄຳພີເປັນທີ່ໜ້າລັງກຽດ. ແຕ່ເມື່ອມາເປັນຄຣິດສະຕຽນແລ້ວ ເຂົາບໍ່ກຽດຊັງກັນຕໍ່ໄປ. ຄລຕ 3:28 ຍົກເລື່ອງສິ່ງກີດກັ້ນລະຫວ່າງ ຊາດຢິວແລະຄົນຕ່າງຊາດ ລະຫວ່າງຂ້ອຍຂ້າກັບອິດສະລະແລະລະຫວ່າງຍິງກັບຊາຍ. ນອກຈາກ ນັ້ນອາດຈະມີສິ່ງກີດກັ້ນລະຫວ່າງຄົນເຖົ້າກັບຄົນໜຸ່ມ, ລະຫວ່າງຄົນມີການສຶກສາແລະຄົນທີ່ບໍ່ຮູ້ໜັງສື ຫຼື ລະຫວ່າງຄົນຢູ່ໃນເມືອງແລະຄົນຢູ່ບ້ານນອກ. ຫຼືທ່ານຄິດວ່າມີອັນໃດອີກ? ໃຫ້ສະເໜີມາ:

__________________________________ ແລະ ______________________________

__________________________________ ແລະ ______________________________

__________________________________ ແລະ ______________________________

**6** ຄລຕ 3:28 ນັ້ນ ບອກວ່າເຮົາເປັນອັນໜຶ່ງອັນດຽວກັນໃນພະເຢຊູຄຣິດ. ແຕ່ການນັ້ນບໍ່ແມ່ນວ່າເຮົາ ທຸກຄົນຈະປາກພາສາດຽວ ບໍ່ແມ່ນວ່າຈະຕ້ອງນຸ່ງເຄື່ອງຢ່າງດຽວກັນໝົດ ບໍ່ຕ້ອງກິນອາຫານຢ່າງ ດຽວກັນໝົດ. ເຖິງວ່າເຮົາເປັນອັນໜຶ່ງອັນດຽວກັນໃນພະເຢຊູກໍຕາມ.

ກ. ຄຣິດສະຕຽນທີ່ທ່ານຮູ້ ມີສ່ວນແຕກຕ່າງກັນໄປຢ່າງໃດ? _________________________

_________________________________________________________________

_________________________________________________________________

_________________________________________________________________

_________________________________________________________________

ຂ. ເຫັນພີ່ນ້ອງຄຣິດສະຕຽນພາສາອື່ນ ໆ ຖານະອື່ນ ໆ ຫຼືຈາກແຂວງອື່ນ ໆ ເຮົາຄວນນັບຖືເຂົາຢ່າງໃດ? ___________________________________________________________

_________________________________________________________________

_________________________________________________________________

**7** ເປັນຫຍັງ ເຮົາບໍ່ຄວນດູຖູກພີ່ນ້ອງຄຼິດສະຕຽນ ແຕ່ຄວນສ້າງຄວາມສຳພັນຢູ່ສະເໝີ? (ໃຫ້ຂຽນລົງຂ້າງລຸ່ມນີ້)

ກ. ______________________________

ຂ. ______________________________

ຄ. ______________________________

ງ. ______________________________

ຈ. ______________________________

ສ. ______________________________

ຊ. ______________________________

**8** ໃຫ້ອ່ານ 1 ໂຢຮັນ 4:10-11

ກ. ບໍ່ເກີດຄວາມຮັກຢູ່ກັບໃຜ? ______________________________

ຂ. ພະເຈົ້າໃຊ້ໃຜມາ? ______________________________

ຄ. ເນື່ອງຈາກວ່າພະເຈົ້າຮັກເຮົາກ່ອນ ເຮົາຄວນຮັກໃຜຕໍ່? ______________

*ພະເຈົ້າຮັກເຮົາກ່ອນ ເພາະເຫດນີ້ເຮົາສາມາດທີ່ຈະຮັກຄົນອື່ນໄດ້.*

**9** ໃຫ້ຄົນໜຶ່ງອ່ານ ຄລຕ 5:13 ແລະອີກຄົນໜຶ່ງອ່ານ ລູກາ 4:39. ທັງສອງຂໍ້ນັ້ນສອນເລື່ອງດຽວ. ຮູບກາຕູນຕໍ່ໄປນີ້ສະແດງວ່າ ຖ້າພະເຢຊູປ່ອຍເຮົາຈາກສິ່ງທີ່ກີດກັ້ນແລ້ວເຮົາຄວນຊ່ວຍຄົນອື່ນ.




ກ. ຕາມໃນ ຄລຕ 5:13 ຖ້າເຮົາມີເສລີພາບແລ້ວ ເຮົາຄວນໃຊ້ຊ່ວຍໃຜ? ______________

______________________________

ຂ. ໃນ ລູກາ 4:39 ພະອົງເຮັດໃຫ້ເຊົາເປັນໄຂ້. ເມື່ອໄຂ້ເຊົາແລ້ວນາງນັ້ນເຮັດຫຍັງ? ______

______________________________

ຄ. ໃນຮູບກາຕູນ ຄົນທີ່ພະເຢຊູປ່ອຍໂສ້ແລ້ວນັ້ນ ລາວເຮັດຫຍັງຕໍ່ໄປ? ______________

______________________________

**10** ມີສິ່ງກີດກັ້ນບາງປະການທີ່ປາກົດເລື້ອຍ ໆ ເຊິ່ງອາດຈະແຍກເຮົາຈາກພີ່ນ້ອງຄົນອື່ນ ຄື: ຄວາມເສົ້າໃຈ ຄວາມຄຽດ ຄວາມອິດສາ ຄວາມຈອງຫອງ ການບໍ່ຍົກໂທດ ການວິຈານ ການບໍ່ອົດທົນ ໆ ລ ໆ.

ກ. ໃຫ້ອ່ານຂໍ້ພະຄຳພີຕໍ່ໄປນີ້:

| | | |
|---|---|---|
| ມທ 5:43-44 | ມທ 7:1-5 | ໂລມ 12:17-21 |
| 1 ກລທ 13:4-7 | ອຟຊ 4:26 | ກລຊ 3:13 |

ໃນຂໍ້ພະຄຳພີເຫຼົ່ານີ້ ມີສິ່ງກີດກັ້ນຢ່າງໃດ? ________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

ຂ. ເຮົາຈະເຮັດສິ່ງໃດໄດ້ ຈຶ່ງຈະທຳລາຍສິ່ງທີ່ກີດກັ້ນເຫຼົ່ານັ້ນ? ____________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

*ໃນສະໄໝສົງຄາມໂລກຄັ້ງທີສອງ ມີຜູ້ຍິງຊາວຮອນແລນສອງເອື້ອຍນ້ອງທີ່ຖືກຂັງໄວ້ເປັນຊະເລີຍເສິກຢູ່ປະເທດເຢຍລະມັນ. ພວກຍາມໃນຄຸກນັ້ນ ທໍລະມານພວກເຂົາຢ່າງໜັກ. ເຂົາອຶດຫິວບໍ່ມີຫຍັງ ກິນຈົນຜູ້ເປັນນ້ອງອົດທົນບໍ່ໄຫວເລີຍຕາຍ. ຍັງແຕ່ຜູ້ເປັນເອື້ອຍກໍທົນ ທຸກທໍລະມານຢ່າງໜັກໜ່ວງ ຈົນວ່າສົງຄາມສິ້ນສຸດລົງພວກຊະເລີຍເສິກໄດ້ຖືກປົດປ່ອຍ.*

*ອີກຫຼາຍປີຜ່ານໄປ ຜູ້ເປັນເອື້ອຍໄດ້ມາຮັບເຊື່ອໃນພະເຍຊູ ແລ້ວກາຍເປັນນັກເທດ ເພິ່ນໄປ ເທດສະໜາຫຼາຍ ໆບ່ອນພ້ອມທັງກ່າວຄຳພະຍານເລື່ອງນ້ອງສາວໃນສະໄໝທີ່ພວກເຢຍລະມັນຂັງ ໄວ້ໃນຄຸກໄດ້ທົນທຸກທໍລະມານນ້ອງສາວຈົນຕາຍ. ມີມື້ໜຶ່ງທີ່ເພິ່ນໄປເທດສະໜາແລະກ່າວເລື່ອງການທີ່ພະເຢ ຊູຍົກຜິດຂອງເຮົາ ເຮົາຈຶ່ງຕ້ອງຍົກຜິດຊຶ່ງກັນແລະກັນ. ຫຼັງຈາກເທດສະໜາແລ້ວມີພີ່ນ້ອງຫຼາຍຄົນ ໄດ້ມາຕ້ອນຮັບແລະຈັບມືນັກເທດ. ເມື່ອລາວຫຼຽວເຫັນຊາຍເຢຍລະມັນຜູ້ໜຶ່ງທີ່ກຳລັງຍ່າງມາເພື່ອຈະ ທຳຄວາມຍິນດີແລະຈັບມືກັບລາວ ເຫັນວ່າໃນເມື່ອກ່ອນຊາຍຄົນນັ້ນກໍເປັນຜູ້ຍາມຄຸກທີ່ໂຫດຮ້າຍທາລຸນ ທີ່ສຸດ. ນັກເທດຊາວຮອນແລນກໍນຶກເຖິງເວລາຍັງເປັນຊະເລີຍເສິກ ນຶກເຖິງນາຍຍາມຄຸກນັ້ນທີ່ຂົ່ມ ເຫັງ ນຶກເຖິງນ້ອງສາວທີ່ຖືກທໍລະມານຈົນຕາຍ. ຕອນນີ້ເຫັນນາຍຍາມທີ່ເຄີຍມີອຳນາດບາດໃຫຍ່ມາ ຈັບມື ໃຈຂອງລາວບໍ່ຢາກຍົກຜິດໃຫ້ຈັກດີ້ ຮູ້ວ່າພະເຈົ້າຈະຍົກຜິດໃຫ້ເພິ່ນ ແຕ່ ຕົວເອງບໍ່ຢາກຍົກຜິດ.*

*ເພິ່ນຈຶ່ງອ້ອນວອນຂໍໃຫ້ພະເຈົ້າຊ່ວຍໃນທັນທີ*

*ເຖິງບໍ່ຢາກຈັບມືກໍຕາມ ແຕ່ລາວກໍບັງຄັບໃຈຕົນເອງ ເມື່ອຈັບມືກັບນາຍຍາມແລ້ວໃນທັນທີນັ້ນກໍ ຮູ້ສຶກ ຕົວວ່າເຕັມໄປດ້ວຍຄວາມຮັກທີ່ມາຈາກພະເຈົ້າ ພ້ອມທັງຈິດໃຈກໍຍົກຜິດໃຫ້ນາຍຍາມນັ້ນ ພ້ອມທັງ ນໍ້າຕາກໍຫຼັ່ງໄຫຼອອກມາ ເລີຍເວົ້າໄດ້ວ່າ: "ຂ້ອຍໂທດດ້ວຍສຸດຈິດແລະສຸດໃຈຂອງຂ້ອຍ!"*

## ຄວາມຮັກຢ່າງນັ້ນມີແຕ່ມາຈາກພະເຈົ້າ

(ໂລມ 5:5)

**11** ຜູ້ເປັນເອື້ອຍນັ້ນເຫັນວ່າມີສິ່ງກີດກັ້ນອັນໃຫຍ່ລະຫວ່າງຕົວເອງ ແລະນາຍຍາມນັ້ນ. ການນັ້ນ ສອນ ເຮົາຢ່າງໃດກ່ຽວກັບການຍົກໂທດຊຶ່ງກັນແລະກັນ? ______________________

______________________________________________________________

______________________________________________________________

______________________________________________________________

*ໃຫ້ອ່ານ ລູກາ 23:33-35 ແລະ ໂລມ 5:5 ແລ້ວອ້ອນວອນປິດປະຊຸມ.*

ຄໍາຕອບ:

**1** *ກ. 10 ປີ ຂ. ຕີໂຕ*

**2** *ກ. ຊາດຢິວ ຫຼື ຄົນຕ່າງຊາດ ຂ້ອຍຂ້າ ຫຼື ອິດສະລະ ຊາຍ ຫຼື ຍິງ*
*ຂ. ເປັນອັນໜຶ່ງອັນດຽວກັນ*

**3** *ກ. ຊາດຢິວ ແລະຄົນຕ່າງຊາດ ຂ. ຄົນຮັ່ງມີກັບຄົນທຸກຍາກ*
*ຄ. ສອງພວກ ງ. ເດັກນ້ອຍ ຈ. ຄົນນອກສິນທໍາ*
*ສ. ຄຣິດສະຕຽນແລະຜູ້ທີ່ຂົ່ມເຫັງເຂົາ ຊ. ເຮົາກັບສັດຕູ*

**4** *(ບໍ່ມີຄໍາຕອບຕາຍຕົວ)*

**5** *(ບໍ່ມີຄໍາຕອບຕາຍຕົວ)*

**6** *ກ. (ໃຫ້ແລກປ່ຽນຄໍາຄິດຄໍາເຫັນ)*
*ຂ. ຖືວ່າເປັນອັນໜຶ່ງອັນດຽວກັນໃນພະເຍຊູໂດຍບໍ່ດູຖູກ ແລະບໍ່ເລືອກໜ້າ (ຄໍາຄ້າຍຄືກັນກໍໄດ້)*

**7** *ກ. ຖ້າເຮົາຈະດູຖູກເຂົາ ເຂົາກໍຈະດູຖູກຕົວເອງ*
*ຂ. ຈະທໍາລາຍຄວາມສະມັກຄີ ໃນຄຣິດສະຕະຈັກ*
*ຄ. ຄົນນອກຈະເຫັນວ່າ ຄຣິດສະຕຽນບໍ່ມີຄວາມຮັກຊຶ່ງກັນແລະກັນ.*
*ງ. ເປັນການຜິດຕໍ່ພະເຈົ້າ*
*ຈ. ພະເຍຊູຮັກໂລກຈົນໄດ້ສະລະຊີວິດ ເຮົາກໍຄວນຮັກພີ່ນ້ອງ*
*ສ. ພະເຍຊູບໍ່ໃຫ້ມີສິ່ງກີດກັ້ນລະຫວ່າງພະອົງກັບຜູ້ອື່ນ*
*ຊ. ພະເຈົ້າສ້າງເຮົາທຸກຄົນ (ຄໍາຕອບຄ້າຍຄືກັນກໍໄດ້)*

ຄຳຕອບ (ຕໍ່):

**8** *ກ. ພະເຈົ້າ ຂ. ພະບຸດ (ພະເຢຊູ) ຄ. ຜູ້ອື່ນ*

**9** *ກ. ຊ່ວຍຊຶ່ງກັນແລະກັນດ້ວຍຄວາມຮັກ*

*ຂ. ລຸກຂຶ້ນບົວລະບັດພະອົງກັບທັງພວກຂອງພະອົງ*

*ຄ. ໄປຊ່ວຍຄົນອື່ນ*

**10** *ກ. ຄວາມຊັງ ການຂົ່ມເຫັງ ການກ່າວໂທດໃສ່ກັນ ການວິຈານ ການເຮັດຊົ່ວຕອບແທນການຊົ່ວ ການແກ້ແຄ້ນ ການເຫິງສາ ການອວດອ້າງ ການຈອງຫອງ ການບໍ່ສຸພາບ ການຄິດເຫັນແກ່ປະໂຫຍດສ່ວນຕົວ ການໃຈຮ້າຍ ການຊອບຈົດຈຳຄວາມຜິດ ການອະທຳ ການມີເລື່ອງຕໍ່ກັນ (ຄຳຄ້າຄືກັນກໍໄດ້)*

*ຂ. ຮັກເຂົາຢ່າງທີ່ພະເຢຊູຮັກເຂົາ*

*ອ້ອນວອນເພື່ອເຂົາ*

*ຮັບໃຊ້ເຂົາ*

*ຢ່າຄຽດ*

*ແທນທີ່ຈະວິຈານເຂົາໃຫ້ວິຈານຕົວເອງ*

*ຍົກໂທດໃຫ້ກັນແລະກັນ ເພາະພະເຢຊູຍົກໂທດໃຫ້ທ່ານ*

**11** *(ບໍ່ມີຄຳຕອບຕາຍຕົວ ແຕ່ອາດຈະມີສ່ວນໃນການຢູ່ໃກ້ກັບພະເຢຊູ ການພ້ອມໃຈທີ່ຈະຍົກໂທດ ຂອງເພິ່ນ ແລະການທີ່ເຮົາຕ້ອງສະເໜີການພ້ອມໃຈຂອງເຮົາກ່ອນ!)*